ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

໑໑໑໑♦໑໑໑໑

ກະຊວງກະສິກຳ-ປ່າໄມ້

ເລກທີ 0234./ກປ

ວຽງຈັນ, ວັນທີ 9/11/95.

# ບົດແນະນຳກ່ຽວກັບການຄຸ້ມຄອງ ການປູກໄມ້ ແລະ ປ່າປູກ

ເຖິງ :
- ບັນດາ ຫົວໜ້າ ພະແນກກະສິກຳປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ.
- ອຳນາດການປົກຄອງທ້ອງຖິ່ນ ຂັ້ນແຂວງ ແລະ ເມືອງ ໃນຂອບເຂດ ທົ່ວປະເທດ.

ພາຍຫຼັງ ທີ່ລັດໄດ້ມີນະໂຍບາຍ ການແບ່ງດິນ ແບ່ງປ່າ ເພື່ອການປູກໄມ້ ແລະ ປົກປັກຮັກສາປ່າໄມ້ ຕາມດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 186/ນຍ ລົງວັນທີ 12 /10 / 1994 ເປັນຕົ້ນມາ ຈຶ່ງໄດ້ເຮັດໃຫ້ຂະບວນການປູກໄມ້ ຂອງມວນຊົນ ຊຶ່ງນັບທັງ ບຸກຄົນ, ຄອບຄົວ, ກຸ່ມກອງລວມໝູ່ ແລະ ຫົວໜ່ວຍທຸລະກິດຕ່າງໆ ຂະຫຍາຍຕົວ ຢ່າງຟົດຟື້ນ ແລະ ກວ້າງຂວາງ ໃນທົ່ວທຸກແຂວງ ຂອງປະເທດເຮົາ ຢ່າງເປັນໜ້າ ສັນລະເສີນ. ແຕ່ຄຽງຄູ່ ກັບດ້ານດີ ແລະ ດ້ານຕັ້ງ ໜ້າດັ່ງກ່າວ, ພວກເຮົາ ຍັງສັງເກດເຫັນໄດ້ ດ້ານອ່ອນ ແລະ ຂໍ້ຄົງຄ້າງ ເຊັ່ນ: ການນຳໃຊ້ ເນື້ອທີ່ດິນ ເພື່ອການປູກໄມ້ ແລະ ການຄັດເລືອກ ຊະນິດພັນໄມ້ ເພື່ອປູກ ບໍ່ທັນແທດເໝາະ ກັບສະພາບເປັນຈິງ ແລະ ບໍ່ຖືກເປົ້າໝາຍ ແລະ ອີກ ດ້ານໜຶ່ງ ພວກເຮົາຍັງຂາດລະບຽບການ ໃນການຄຸ້ມຄອງ ການປູກໄມ້ ແລະປ່າປູກ.

ສະນັ້ນ ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ, ກະຊວງ ກະສິກຳ-ປ່າໄມ້ ອອກບົດແນະນຳດັ່ງນີ້ :

## I. ຈຸດປະສົງ ຂອງການປູກໄມ້

ການປູກໄມ້ ໂດຍທົ່ວໄປແລ້ວ ມີ 3 ຈຸດປະສົງຄື : ການປູກໄມ້ ເພື່ອເປັນສິນຄ້າ ໃຊ້ສອຍ ຂອງບຸກຄົນ, ຄອບ ຄົວ, ກຸ່ມກອງລວມໝູ່ ແລະ ຂອງຫົວໜ່ວຍທຸລະກິດຕ່າງໆ; ການປູກໄມ້ ເພື່ອການຄົ້ນຄວ້າ ທົດລອງ ແລະ ການປູກໄມ້ ເພື່ອປ້ອງກັນສະພາບແວດລ້ອມ.

ການປູກໄມ້ ເພື່ອເປັນສິນຄ້າໃຊ້ສອຍ ຕ້ອງມີການຄັດເລືອກ ຊະນິດພັນໄມ້ ຕາມຄວາມຕ້ອງການໃນການຊົມໃຊ້, ຕາມຄວາມຕ້ອງການ ຂອງຕະຫລາດ ແລະ ຕາມເງື່ອນໄຂ ຂອງສະພາບດິນຟ້າອາກາດ ຢູ່ແຕ່ລະທ້ອງຖິ່ນ.

ການປູກໄມ້ ເພື່ອການຄົ້ນຄວ້າທົດລອງຈະມີແຕ່ບັນດາສະຖານີ ຫຼື ສູນທົດລອງ ຂອງສູນກາງ, ຂອງແຂວງ, ໂຮງຮຽນ ແລະ ບາງບໍລິສັດ ທີ່ລັດເປັນຜູ້ສະໜອງງົບປະມານ ເພື່ອແນໃສ່ບັນລຸຈຸດປະສົງ ຂອງການຄົ້ນຄວ້າທົດລອງຊອກຫາຂໍ້ມູນເພື່ອສ້າງເປັນເອກະສານວິຊາການ. ສ່ວນການປູກໄມ້ ເພື່ອປ້ອງກັນສິ່ງແວດລ້ອມ ແມ່ນການປູກໄມ້ ເພື່ອຮັກສາແຫຼ່ງນ້ຳ ແລະ ຕ້ານ ການເຊາະເຈື່ອນຂອງ ດິນ. ການປູກໄມ້ ປະເພດນີ້, ສ່ວນຫລາຍແມ່ນປູກໄປຕາມແຜນການ ທີ່ລັດໄດ້ກຳນົດໄວ້ ແລະ ຊະນິດພັນໄມ້ສ່ວນໃຫຍ່ທີ່ປູກ ແມ່ນພັນໄມ້ພື້ນເມືອງຍາວນານ ຊຶ່ງມີຖິ່ນກຳເນີດຢູ່ ທີ່ນັ້ນ ເຊັ່ນ ໄມ້ດູ່, ໄມ້ແຕ້ຂາ, ໄມ້ຍາງ, ໄມ້ແຄນ ແລະ ອື່ນໆ.

ແຮງງານທີ່ນຳໃຊ້ເຂົ້າໃນການປູກໄມ້ ຕາມຈຸດປະສົງ ທີ່ກ່າວຂ້າງເທິງນັ້ນ ຕ້ອງເລັ່ງໃສ່ຄອບຄົວຊາວກະສິກອນ ທີ່ຍັງຖາງປ່າເຫລົ່າ ເພື່ອເຮັດໄຮ່ແບບໝູນວຽນ, ທັງນີ້ ກໍເພື່ອສ້າງເງື່ອນໄຂ ໃຫ້ເຂົາເຈົ້າເຫລົ່ານັ້ນ ສາມາດຫັນຈາກການຖາງປ່າເຮັດໄຮ່ ໄປສູ່ອາຊີບ ທີ່ໝັ້ນຄົງ ແລະຖາວອນ ຄືການປູກໄມ້ ເພື່ອເປັນສິນຄ້າ. ພ້ອມກັນນັ້ນ ຕ້ອງນຳໃຊ້ຄອບຄົວປະຊາຊົນ ທີ່ມີຄວາມສາມາດ ແລະ ທຶນຮອນພຽງພໍ ໃນການສ້າງ ແລະ ຂະຫຍາຍສວນກ້າເບ້ຍໄມ້ນາໆຊະນິດກັບທີ່ ຕອບສະໜອງໃຫ້ແກ່ຄວາມຮຽກຮ້ອງຕ້ອງການ ໃນວົງເຂດທ້ອງຖິ່ນ ທີ່ມີຂະບວນການປູກໄມ້.

## II. ດິນ ສຳລັບການປູກໄມ້

ດິນທີ່ຈະນຳໃຊ້ ເພື່ອການປູກໄມ້ ລວມມີ 2 ປະເພດ ດັ່ງນີ້ :

1. ດິນ ທີ່ເປັນກຳມະສິດ ຂອງບຸກຄົນ, ກົມກອງລວມໝູ່ ແລະ ຫົວໜ່ວຍ ທຸລະກິດຕ່າງໆ

ລັດອະນຸຍາດໃຫ້ປູກໄມ້ໃສ່ດິນ ທີ່ເປັນກຳມະສິດຂອງບຸກຄົນ, ກົມກອງລວມໝູ່ ແລະ ຫົວໜ່ວຍທຸລະກິດຕ່າງໆ ຊຶ່ງດິນຈຳນວນດັ່ງກ່າວຕ້ອງມີເອກະສານ ຢັ້ງຢືນ ຖືກຕ້ອງ ຈາກອຳນາດການປົກຄອງ ທ້ອງຖິ່ນ ຂັ້ນບ້ານ ແລະ ເມືອງແມ່ນອະນຸຍາດ ໃຫ້ປູກໄມ້ໄດ້ ແຕ່ຕ້ອງຫຼີກເວັ້ນ ເນື້ອທີ່ ທີ່ໄດ້ບຸລິມະສິດໃຫ້ແກ່ ການຜະລິດກະສິກຳເຊັ່ນ : ດິນເໝາະສົມສຳລັບການປູກຝັງ, ທົ່ງນາ ເພື່ອປູກເຂົ້າ ແລະ ທົ່ງ ຫຍ້າ ເພື່ອລ້ຽງສັດ.

2. ດິນປ່າໄມ້ຊຸດໂຊມ ແລະ ດິນປອກຫຼ້ອນ ທີ່ເປັນກຳມະສິດ ຂອງລັດ

ລັດຊຸກຍູ້ ແລະສົ່ງເສີມໃຫ້ປູກໄມ້ ໃສ່ດິນປ່າໄມ້ຊຸດໂຊມຂອງລັດ ຊຶ່ງລວມມີ : ດິນປອກໂຫລ້ນ, ດິນປ່າເຫລົ່າ, ດິນປ່າໂຄກ ແລະ ດິນປ່າຄັງ ທີ່ບໍ່ມີພັນໄມ້ທີ່ມີຄຸນຄ່າທາງດ້ານເສດຖະກິດ ແລະ ບໍ່ສາມາດຟື້ນຟູແບບທຳມະຊາດ ໃຫ້ກາຍເປັນປ່າອຸດົມສົມບູນຄືນໃໝ່ ແຕ່ກ່ອນບຸກຄົນ, ກົມກອງລວມໝູ່ ແລະ ຫົວໜ່ວຍ ທຸລະກິດໃດໜຶ່ງ ຈະນຳໃຊ້ດິນດັ່ງກ່າວ ເຂົ້າໃນການປູກໄມ້ນັ້ນ ຕ້ອງໄດ້ຜ່ານການກວດກາ, ຢັ້ງຢືນ ແລະ ມອບໝາຍ ຈາກຄະນະກຳມະການແບ່ງດິນ ແບ່ງປ່າ ຂອງທ້ອງ ຖິ່ນຂັ້ນແຂວງ ແລະ ເມືອງ. ດິນຈຳນວນນີ້ ຫ້າມບໍ່ໃຫ້ມີການຈັບຈອງ, ແບ່ງປັນ, ມອບໂອນ ແລະ ຊື້ຂາຍ ໂດຍບໍ່ມີອົງການຈັດຕັ້ງຂອງລັດ ຂັ້ນມີສິດ ຮັບຮູ້ນຳ. ຫ້າມແບ່ງປັນ ແລະ ອະນຸຍາດບຸກເບີກ ແລະ ມ້າງປ່າທຳມະຊາດ ທີ່ມີຕົ້ນໄມ້ຢູ່ແລ້ວ ເພື່ອສ້າງ ເປັນສວນປູກໄມ້ ຄືນໃໝ່ ເຊັ່ນ : ປ່າໂຄກ ທີ່ຍັງສາມາດສືບພັນ ຫຼື ຟື້ນຟູແບບທຳມະຊາດ, ປ່າເຫຼົ່າແກ່ ຫຼື ໄຮ່ ເກົ່າ ຊຶ່ງມີພັນໄມ້ ທີ່ມີຄຸນຄ່າທາງດ້ານເສດຖະກິດ ເກີດຂຶ້ນຢ່າງຫຼວງຫຼາຍ ແລະ ສາມາດຟື້ນຟູ ແບບທຳມະຊາດ, ປ່າຍອດນ້ຳ ແລະ ອ່າງນ້ຳ ຕ່າງໆ ຊຶ່ງຕ້ອງໄດ້ປົກປັກຮັກສາໄວ້ ໃຫ້ເປັນປ່າທຳມະຊາດທີ່ຟື້ນຟູໃຫ້ຖາວອນຕະຫລອດໄປ.

## III. ລະບຽບການຄຸ້ມຄອງປ່າປູກ

### ກ. ລະບຽບການ ທີ່ຕ້ອງປະຕິບັດ ກ່ອນການປູກໄມ້

①. ບຸກຄົນ, ຄອບຄົວ ແລະກົມກອງລວມໝູ່ ທີ່ຈະປູກໄມ້ໃສ່ດິນຂອງຕົນເອງທີ່ມີເນື້ອທີ່ແຕ່ 5 ເຮັກຕາລົງມາ

1.1 ປູກໂດຍນຳໃຊ້ທຶນ ຂອງຕົນເອງ : ຜູ້ທີ່ມີຈຸດປະສົງຈະປູກໄມ້ດ້ວຍທຶນ ແລະ ດິນຂອງຕົນເອງບໍ່ຈຳເປັນຕ້ອງຂຽນບົດວິພາກເສດຖະກິດ ເຕັກນິກ ໄປຜ່ານ ແລະ ຂໍອະນຸຍາດ ຈາກອົງການຂອງລັດ, ໝາຍຄວາມວ່າ ໃຫ້ລົງມື ປູກໂລດແຕ່ພາຍຫຼັງປູກສຳເລັດແລ້ວ ຕ້ອງປະກອບເອກະສານ ເພື່ອສະເໜີ ໃຫ້ປ່າໄມ້ບ້ານ, ນາຍບ້ານ ແລະ ຫ້ອງການ ກະສິກຳ-ປ່າໄມ້ເມືອງ ລົງກວດກາ ແລ້ວ ຢັ້ງຢືນ ແລະ ຮັບຮອງເອົາ. ທັງນີ້ ກໍເພື່ອຄວາມສະດວກ ໃນການ ຕິດ ຕາມ, ຄຸ້ມຄອງ ແລະ ເປັນຫຼັກຖານ ໃຫ້ແກ່ການຍົກເວັ້ນພາສີທີ່ດິນ, ຍົກເວັ້ນຄ່າບຸລະນະ ແລະ ຄ່າຊັບພະຍາກອນ ປ່າໄມ້ ໃນ ເວລາຕັດ ເພື່ອນຳໃຊ້ ແລະ ຈຳໜ່າຍໄມ້ປູກ ຈຳນວນດັ່ງກ່າວ. ເອກະສານ ທີ່ຜູ້ປູກໄມ້ ຕ້ອງປະກອບ ລວມມີ : ໃບຄຳຮ້ອງ ຂອງຕົນ ເອງ ເພື່ອສະເໜີ ໃຫ້ປ່າໄມ້ບ້ານ, ຫ້ອງການກະສິກຳ-ປ່າໄມ້ເມືອງ ລົງກວດກາ ແລະ ຢັ້ງຢືນວ່າ ຕົນເອງໄດ້ປູກໄມ້ ໃສ່ດິນ ຂອງຕົນເອງ ແທ້ຈິງຊຶ່ງ ໃນນັ້ນຕ້ອງບອກແຈ້ງ ກ່ຽວກັບຂະໜາດ ຂອງເນື້ອທີ່, ຊະນິດ ແລະ ຈຳນວນຕົ້ນໄມ້ ທີ່ໄດ້ປູກ, ໄລຍະຫ່າງ ຂອງຕົ້ນໄມ້ທີ່ປູກ ເຊັ່ນ: 2 ແມດ×2 ແມດ, 3 ແມດ×3 ແມດ.... ,ໃບຢັ້ງຢືນ ກ່ຽວກັບ ທີ່ດິນ ແລະ ແຜນວາດ ກ່ຽວກັບ ສະຖານທີ່ຕັ້ງຂອງເນື້ອທີ່ດິນ.

1.2 . ປູກໂດຍນຳໃຊ້ ທຶນກູ້ຢືມ ຈາກທະນາຄານ : ຜູ້ທີ່ມີຈຸດປະສົງ ທີ່ຈະປູກໄມ້ໃສ່ດິນຂອງຕົນເອງດ້ວຍທຶນກູ້ຢືມຈາກທະນາຄານ ຕ້ອງປະກອບເອກະສານ ແບບຄົບຊຸດ ຊຶ່ງລວມມີ : ໃບຢັ້ງຢືນ ທີ່ດິນ ພ້ອມດ້ວຍແຜນວາດ ກ່ຽວກັບຂະໜາດ ແລະ ທີ່ຕັ້ງ, ໃບຄຳຮ້ອງຂໍກູ້ຢືມທຶນ ເພື່ອປູກໄມ້ ຕາມລະບຽບການສະເພາະ ຂອງທະນາຄານ ແລະ ບົດ ວິພາກເສດຖະກິດເຕັກນິກ.

ເນື້ອໃນຂອງບົດວິພາກເສດຖະກິດເຕັກນິກ ປະກອບມີດັ່ງນີ້ :

1. ຊະນິດພັນໄມ້ ທີ່ຈະປູກ : ຊະນິດພັນໄມ້ ທີ່ຈະປູກນັ້ນ ແມ່ນໃຫ້ອີງຕາມຈຸດປະສົງ ຂອງການປູກເປັນຫຼັກ ແລະ ສະພາບດິນຟ້າອາກາດ ຂອງທ້ອງຖິ່ນ ເຂດເນື້ອທີ່ ທີ່ຈະປູກໄມ້ ເປັນສິ່ງສຳຄັນ.

2. ການກຽມດິນ : ໃນການກຽມດິນ ເພື່ອປູກໄມ້ ແມ່ນໃຫ້ປະຕິບັດຕາມສະພາບຕົວຈິງ ຂອງພື້ນທີ່, ຖ້າວ່າ ພື້ນທີ່ນັ້ນຮາບພຽງ ແລະ ບໍ່ມີຕົ້ນໄມ້ ຕ້ອງໄຖພວນດິນ ແລ້ວຈຶ່ງ ຂຸດຂຸມປູກ ແຕ່ຖ້າພື້ນທີ່ນັ້ນ ມີຄວາມຄ້ອຍຊັນ ແລະ ຍັງມີຕົ້ນໄມ້ ທີ່ຈະຕ້ອງ ຮັກສາໄວ້ ກໍບໍ່ຈຳເປັນ ຕ້ອງໄຖ, ຖາກຖາງກ່ຽງ ແລະ ຈູດ

ມີແຕ່ຂຸດຂຸມ ປູກໂລດ. ສ່ວນໄລຍະຫ່າງ ຂອງຕົ້ນໄມ້ທີ່ປູກ, ໃຫ້ອີງໃສ່ແຕ່ລະຊະນິດພັນໄມ້ ແລະ ຈຸດປະສົງຂອງການປູກ ຕົວຢ່າງ : ການປູກໄມ້ ເພື່ອປົກປັກຮັກສາສິ່ງແວດລ້ອມ ກໍຕ້ອງປູກໃຫ້ຖີ່ ເຊັ່ນ : 2 ແມັດ × 2 ແມດ ດັ່ງນີ້ ເປັນຕົ້ນ ສ່ວນໃຫຍ່ ກໍບໍ່ຄວນແຕະຕ້ອງສະພາບຂອງດິນ ຫຼື ໄຖດິນ ຖ້າຫາກປູກໄມ້ເນື້ອແຂງຂອງປະເທດເຮົາ ເພາະຈະທຳໃຫ້ສະພາບນິເວດປ່ຽນແປງ.

3. ການລ້ອມຮົ້ວ : ເພື່ອສະກັດກັ້ນບໍ່ໃຫ້ຕົ້ນໄມ້ ທີ່ໄດ້ປູກແລ້ວນັ້ນ ຖືກລົບກວນ ແລະ ທຳລາຍ ຈາກສັດລ້ຽງ ເຊັ່ນ ງົວ, ຄວາຍ, ແບ້ ແລະ ອື່ນໆ ຕະຫຼອດເຖິງສັດປ່າ ປະເພດຕ່າງໆ, ມັນມີຄວາມຈຳເປັນຕ້ອງໄດ້ເຮັດຮົ້ວ ອ້ອມ ໄວ້ ແຕ່ປະເພດຂອງຮົ້ວນັ້ນ ແມ່ນໃຫ້ອີງໃສ່ ຄວາມສາມາດ ຂອງທຶນຮອນ ແລະ ສະພາບຈຸດພິເສດ ຂອງທ້ອງຖິ່ນ ແຕ່ສະເພາະຢູ່ໃນເຂດທ້ອງຖິ່ນ ທີ່ບໍ່ມີການລົບກວນ ຈາກສັດລ້ຽງ ແລະ ສັດປ່າປະເພດຕ່າງໆ ກໍບໍ່ຈຳເປັນຕ້ອງເຮັດຮົ້ວ, ມີແຕ່ກຳນົດ ແລະ ໝາຍເຂດແດນໃຫ້ຈະແຈ້ງ.

4. ການບົວລະບັດຮັກສາ : ຕົ້ນໄມ້ ທີ່ປູກແລ້ວ ຈະສາມາດ ຈະເລີນເຕີບໂຕຂຶ້ນໄດ້ພຽງໃດນັ້ນ ແມ່ນຂຶ້ນຢູ່ ທີ່ການບົວລະບັດຮັກສາ. ຕາມທຳມະດາແລ້ວ ຕົ້ນໄມ້ ທີ່ໄດ້ລົງມືປູກແລ້ວ ຕ້ອງໄດ້ບົວລະບັດຮັກສາຢ່າງໃກ້ຊິດ ຈົນກວ່າ ອາຍຸມັນໄດ້ 3-4 ປີຂຶ້ນໄປ ໂດຍສະເພາະ ແມ່ນການກຳຈັດ ຕັດຖາງ ວັດຊະພືດ, ພະຍາດ ແລະ ບົ້ງແມງ ທີ່ເກີດ ຂຶ້ນລົບກວນກັບຕົ້ນໄມ້ ທີ່ປູກ ເຊັ່ນ : ຫຍ້າ, ເຄືອເຂົາ ແລະ ຕົ້ນໄມ້ ອື່ນໆ ທີ່ບໍ່ແມ່ນເປົ້າໝາຍ ຂອງການປູກ ຊຶ່ງໃນປີທີ 1 ແລະ 2 ຕ້ອງກຳຈັດ ວັດຊະພືດ ຢ່າງນ້ອຍ 2-3 ຄັ້ງ, ຄັ້ງທີ 1 ຫຼັງຈາກປູກແລ້ວ 2 ເດືອນ, ຄັ້ງທີ 2 ທ້າຍລະດູຝົນ ແລະ ຄັ້ງທີ 3 ແມ່ນຕົ້ນລະດູແລ້ງ ແລະ ສ່ວນໃນປີທີ 3 ກໍຕ້ອງເຮັດອີກ ແຕ່ 1-2 ຄັ້ງ.

ນອກຈາກນັ້ນ ຍັງຕ້ອງໄດ້ຕິດຕາມຕື່ມອີກ ຖ້າຈຳເປັນກໍຕັດຕອນງ່າ ເພື່ອໃຫ້ໄດ້ໄມ້ງາມ ຈົນກວ່າຕົ້ນໄມ້ນັ້ນ ມີອາຍຸເຖິງກຳນົດໝາຍເວລາ ຂອງການຕັດຟັນ ແລະ ນຳໃຊ້.

5. ມູນຄ່າການລົງທຶນ : ໝາຍເຖິງມູນຄ່າທັງໝົດທີ່ຕ້ອງໄດ້ນຳໃຊ້ເຂົ້າໃນການປູກໄມ້ ຊຶ່ງລວມມີ : ຄ່າບຸກເບີກກຽມດິນ, ຄ່າເບ້ຍໄມ້, ຄ່າປູກ, ຄ່າປຸ໋ຍ, ຢາຂ້າແມງໄມ້ ແລະ ຄ່າປົກປັກຮັກສາ, ຄ່າດອກເບ້ຍເງິນກູ້ ຢືມ, ຄ່າພັນທະ ແລະ ລາຍຈ່າຍບໍລິຫານຕ່າງໆ

6. ຄາດຄະເນ ກຳນົດໝາຍເວລາ ແລະ ບໍລິມາດໄມ້ ທີ່ສາມາດຂາຍໄດ້ : ໝາຍເຖິງເວລາທັງໝົດ ທີ່ຕົ້ນໄມ້ ຕ້ອງການ ເພື່ອການຈະເລີນເຕີບໂຕ ຊຶ່ງນັບແຕ່ມື້ປູກ ຮອດມື້ຕັດ ແລະ ເມື່ອຮອດມື້ຕັດຈະມີບໍລິມາດໄມ້ ເທົ່າໃດ ທີ່ສາມາດຂາຍໄດ້. ກຳນົດໝາຍ ດັ່ງກ່າວຂຶ້ນ ຢູ່ກັບພູມອາກາດ ການບົວລະບັດຮັກສາ, ຊະ ນິດພັນໄມ້ ທີ່ປູກ ແລະ ປະສິດທິພາບ ຂອງດິນ.

7. ການຕະຫລາດ : ຜົນຜະລິດທີ່ຈະໄດ້ມາ ຕ້ອງມີແຜນການຄາດຄະເນລ່ວງໜ້າ ໃນການຈຳໜ່າຍ ຊຶ່ງ ລວມມີ ການຈຳໜ່າຍ ເພື່ອປຸງແຕ່ງ ຮັບໃຊ້ພາຍໃນ ຫຼື ສົ່ງອອກຂາຍ ຕ່າງປະເທດ, ແຕ່ທາງທີ່ດີແທ້ຕ້ອງມີສັນຍາຜູກພັນ ແລະ ຄ້ຳປະກັນລາຄາ ກັບລູກຄ້າໄວ້ກ່ອນ ໂດຍສະເພາະ ແມ່ນໄວ້ໃຫຍ່ໄວ.

8. ດຸນດ່ຽງ ລາຍຮັບ ແລະ ລາຍຈ່າຍ : ຈຸດປະສົງ ຂອງການດຸນດ່ຽງ ລາຍຮັບ ແລະ ລາຍຈ່າຍ ແມ່ນເພື່ອຢາກຄາດຄະເນໄວ້ລ່ວງໜ້າກ່ອນ ກ່ຽວກັບຜົນກຳໄລ ຈາກການລົງທຶນ ປູກໄມ້, ຊຶ່ງຈະໄດ້ [illegible]ານ ເອົາມູນຄ່າການລົງທຶນ ທັງໝົດ ໄປລົບໃຫ້ລາຍຮັບ ທັງໝົດ ທີ່ຈະໄດ້ຈາກການຂາຍໄມ້.

②. ບຸກຄົນ, ຄອບຄົວ, ກົມກອງລວມໝູ່, ຫົວໜ່ວຍທຸລະກິດ ຂອງລັດ ແລະ ເອກະຊົນ ຢູ່ພາຍໃນປະເທດ ທີ່ຕ້ອງ ການລົງທຶນປູກໄມ້ ໃສ່ເນື້ອທີ່ດິນ ເກີນ 5 ເຮັກຕາ ຂຶ້ນຫາ 100 ເຮັກຕາ ໂດຍນຳໃຊ້ທຶນ ຂອງຕົນເອງ ຫຼື ກູ້ຢືມ ຈາກທະນາຄານ ກໍລ້ວນແຕ່ຕ້ອງໄດ້ປະກອບເອກະສານ ຄົບຖ້ວນ ກ່ຽວກັບເນື້ອທີ່ດິນ ດັ່ງທີ່ໄດ້ກຳນົດໄວ້ ໃນ ຂໍ້ II ພ້ອມດ້ວຍບົດວິພາກ ເສດຖະກິດເຕັກນິກ ຕາມທີ່ໄດ້ແນະນຳ ຢູ່ III ຂໍ້ 1.2 ນຳສະເໜີຜ່ານປ່າໄມ້ບ້ານ, ຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ພະແນກກະສິກຳ-ປ່າໄມ້ແຂວງ ເພື່ອຄົ້ນຄວ້າທາງດ້ານວິຊາການ ແລະ ນຳສະເໜີໃຫ້ທ່ານເຈົ້າແຂວງພິຈາລະນາ. ພາຍຫຼັງເຈົ້າແຂວງຕົກລົງ ເຫັນດີແລ້ວ ຈຶ່ງແຈ້ງ ແລະ ມອບ ໃຫ້ທ່ານ ເຈົ້າເມືອງ ເປັນຜູ້ອອກໃບອະນຸຍາດ ຕາມມາດຕາ 21 ຂອງດຳລັດ 186/ນຍ.

③. ບຸກຄົນ, ຄອບຄົວ, ກົມກອງລວມໝູ່, ຫົວໜ່ວຍທຸລະກິດ ຂອງລັດ ແລະ ເອກະຊົນ ຢູ່ພາຍໃນປະເທດ ທີ່ຕ້ອງການລົງທຶນປູກໄມ້ ໃສ່ເນື້ອທີ່ດິນແຕ່ 101 - 1.000 ເຮັກຕາ ຕ້ອງປະກອບ ເອກະສານຄົບຖ້ວນ ກ່ຽວກັບ

ກໍລະນີ ຢູ່ຂໍ້ທີ 2 ເທິງນັ້ນ ນຳສະເໜີຜ່ານປ່າໄມ້ບ້ານ, ຫ້ອງການກະສິກຳປ່າໄມ້ເມືອງ ແລະ ພະແນກກະສິກຳ ປ່າໄມ້ ແຂວງ ແລ້ວ ສົ່ງໃຫ້ກະຊວງກະສິກຳ-ປ່າໄມ້ ເພື່ອພິຈາລະນາ. ພາຍຫຼັງ ທີ່ລັດຖະມົນຕີ ຕົກລົງ ເຫັນດີແລ້ວ ຈຶ່ງແຈ້ງ ແລະ ມອບໃຫ້ທ່ານເຈົ້າແຂວງ ເປັນຜູ້ອອກໃບອະນຸຍາດ ຕາມມາດຕາ 22 ຂອງດຳລັດ 186/ນຍ.

④. ບຸກຄົນ, ຄອບຄົວ, ກຸ່ມກອງລວມໝູ່, ຫົວໜ່ວຍທຸລະກິດ ຂອງລັດ ແລະ ເອກະຊົນ ຢູ່ພາຍໃນປະເທດ ທີ່ຕ້ອງ ການລົງທຶນປູກໄມ້ ໃສ່ເນື້ອທີ່ດິນ ແຕ່ 1.001 ເຮັກຕາຂຶ້ນໄປ ຕ້ອງປະກອບ ເອກະສານຄົບຖ້ວນ ຄືກັນກັບກໍລະນີ ຢູ່ຂໍ້ທີ 3 ເທິງນັ້ນ. ສະເໜີ ມາຍັງກະຊວງກະສິກຳ-ປ່າໄມ້ ເພື່ອຄົ້ນຄວ້າ ແລະ ຢັ້ງຢືນ ທາງດ້ານວິຊາ ການ ແລ້ວນຳ ສະເໜີ ລັດຖະບານ ເພື່ອພິຈາລະນາ. ພາຍຫຼັງ ທີ່ລັດຖະບານ ຕົກລົງ ເຫັນດີແລ້ວ ຈຶ່ງແຈ້ງ ແລະ ມອບໃຫ້ ລັດຖະມົນຕີກະຊວງກະສິກຳ-ປ່າໄມ້ ເປັນຜູ້ອອກໃບອະນຸຍາດ ຕາມມາດຕາ 23 ຂອງດຳລັດ 186/ນຍ.

⑤ ບັນດາບໍລິສັດ ແລະ ນັກທຸລະກິດຕ່າງປະເທດ ທີ່ມີຈຸດປະສົງ ຢາກມາລົງທຶນປູກໄມ້ ຢູ່ ສປປ ລາວນັ້ນ, ກະຊວງ ກະສິກຳ-ປ່າໄມ້ ຍິນດີ ສົ່ງເສີມ, ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມື ຕາມຜາລະບົດບາດ ແຕ່ຜູ້ລົງທຶນ ຕ້ອງປະກອບເອກະສານ ສະເໜີຜ່ານ ຄະນະກຳມະການແຜນການ ແລະ ການຮ່ວມມືເສຍກ່ອນ; ຫຼັງຈາກນັ້ນ ຈຶ່ງ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ຕາມມາດຕາ 9 ຂອງດຳລັດ 186/ນຍ.

## ຂ. <u>ລະບຽບການຄຸ້ມຄອງ ແລະ ນຳໃຊ້ໄມ້ປູກ ແລະ ປ່າປູກ</u>

### ①. <u>ການກວດກາ ຢັ້ງຢືນ ແລະ ຂຶ້ນທະບຽນ ສວນປູກໄມ້</u>

ບຸກຄົນ, ຄອບຄົວ, ກຸ່ມກອງລວມໝູ່, ຫົວໜ່ວຍທຸລະກິດຂອງລັດ ແລະເອກະຊົນຢູ່ພາຍໃນປະເທດ ທີ່ ລົງທຶນ ປູກໄມ້ ໃສ່ເນື້ອທີ່ດິນຂອງຕົນເອງ ແລະ ດິນ ຂອງລັດ, ຖ້າຢາກໃຫ້ລັດຍົກເວັ້ນພາສີທີ່ດິນ ການປູກໄມ້, ຍົກເວັ້ນ ຄ່າບຸລະນະ ແລະ ຄ່າຊັບພະຍາກອນປ່າໄມ້ ໃນເວລາຕັດ ເພື່ອນຳໃຊ້ ແລະ ຈຳໜ່າຍ ຕາມມາດຕາ 16 ຂອງດຳລັດ 186/ ນຍ, ຕ້ອງ ປະຕິບັດ ດັ່ງນີ້:

1.1 ຕ້ອງປູກໄມ້ແບບລວມສູນ ແລະ ຕ້ອງມີເນື້ອທີ່ ແຕ່ 1 ໄລ່ ຫຼື 1/6 ຂອງເຮັກຕາ ຂຶ້ນໄປ ຊຶ່ງໂດຍສະເລ່ຍແລ້ວ ສຳລັບພັນໄມ້ທົ່ວໄປ ທີ່ປູກໃນໄລຍະຫ່າງ 3 ແມດ × 3 ແມດ ຕ້ອງມີຈຳນວນ ຕົ້ນໄມ້ປູກ ຈຳນວນ 180 ຕົ້ນ ຕໍ່ 1 ໄລ່ ຫຼື 1.100 ຕົ້ນ ຕໍ່ 1 ເຮັກຕາ ແຕ່ສະເພາະໄມ້ຢາງພາລາ ແລະ ສຸມໄມ້ໃຜ່ ທີ່ປູກ ໃນໄລຍະຫ່າງ 5 ແມດ × 5 ແມດ ຕ້ອງ ມີ ຈຳນວນ 65 ຕົ້ນ ຕໍ່ 1 ໄລ່ ຫຼື 400 ຕົ້ນ ຕໍ່ 1 ເຮັກຕາ, ລະອຽດແທ້ ກ່ຽວກັບໄລຍະຫ່າງຂອງຕົ້ນໄມ້ທີ່ປູກ ແມ່ນໃຫ້ອີງໃສ່ ສະພາບຕົວຈິງ ຂອງແຕ່ລະຊະນິດພັນໄມ້ ຕາມຫຼັກວິຊາການ.

ສ່ວນການ ປູກໄມ້ ແບບກະແຈກກະຈາຍໄປຕາມແຄມທາງ, ແຄມນາ, ແຄມຮົ້ວສວນ ແລະ ບ້ານຕາງໆ ຊຶ່ງ ດິນຕອນດັ່ງກ່າວ ໄດ້ນຳໃຊ້ປູກພືດກະສິກຳ, ລັຽງສັດ ຫຼື ກິດຈະການປຸກສ້າງ ອື່ນໆ ລັດຈະຍົກເວັ້ນສະເພາະແຕ່ຄ່າ ບຸລະນະ ແລະ ຄ່າຊັບພະຍາກອນ ໃນເວລາຕັດໄມ້ ດັ່ງກ່າວໄປນຳໃຊ້ ຕາມ ມາດຕາ 16 ຂອງດຳລັດ 186/ນຍ. ສຳລັບ ຄ່າພາສີ ທີ່ດິນຂອງເນື້ອທີ່ດິນ ຕອນດັ່ງກ່າວ ແມ່ນໃຫ້ຄິດໄລ່ ແລະ ເສຍຕາມ ມາດຕາ 5 ແລະ 6 ຂອງດຳລັດ ນາຍົກລັດຖະມົນຕີ ສະບັບເລກທີ 50/ນຍ, ລົງວັນທີ 13/3/93 ວ່າດ້ວຍພາສີທີ່ດິນ.

1.2 ພາຍຫຼັງ ທີ່ສຳເລັດການປູກໄມ້ ແຕ່ລະປີ, ເຈົ້າຂອງສວນປູກ ຕ້ອງໄດ້ລາຍງານໃຫ້ ຫ້ອງການກະສິກຳ-ປ່າໄມ້ ເມືອງ ແລະ ພະແນກ ກະສິກຳ-ປ່າໄມ້ ແຂວງ ເພື່ອລົງກວດກາ ແລະ ຂຶ້ນທະບຽນ ຢັ້ງຢືນໃຫ້ຂັ້ນທີ່ມີສິດ ຕົກລົງຮັບ ຮອງເອົາ ຕາມຈຳນວນຕົວຈິງ ໂດຍໃຫ້ສອດຄ່ອງ ຕາມມາດຕາ 14 ຂອງດຳລັດ 186/ນຍ ຊຶ່ງຕ້ອງໄດ້ລົງກວດກາ ປີລະເທື່ອ ໃນຊ່ວງໄລຍະ 3ປີທຳອິດ.

1.3 ຖ້າເຫັນວ່າ ມີຄວາມຈຳເປັນ ເຈົ້າໜ້າທີ່ພາສີ ທີ່ດິນ ຂອງເມືອງ, ຂອງແຂວງ ແລະ ເຈົ້າໜ້າທີ່ທະນາຄານ ຕ້ອງສົມທົບກັນ ໃນການລົງກວດກາ ເພື່ອສະດວກ ໃນການປະຕິບັດ ນະໂຍບາຍພາສີ ແລະ ການຊຳລະສະສາງ ກັບ ທະນາຄານ ໃນກໍລະນີ ຜູ້ລົງທຶນ ໄດ້ກູ້ຢືມເງິນ ຈາກທະນາຄານ.

### ②. <u>ການໂອນສິດສືບທອດ, ການມອບສິດຄຸ້ມຄອງສວນປູກ, ການຊື້ຂາຍໄມ້ຢືນຕົ້ນ ໃນສວນປູກ ແລະ ການ ຕັດໄມ້ປູກ.</u>

2.1 ການໂອນສິດສືບທອດ ຕາມມາດຕາ 17 ຂອງດຳລັດ 186/ນຍ ແມ່ນການໂອນຊື່ ຫຼື ປ່ຽນຊື່ ຜູ້ ຄຸ້ມຄອງ

ສວນປູກໄມ້ ໃນລະຫວ່າງຜົວເມຍ, ລູກ, ອ້າຍ, ເອື້ອຍ, ນ້ອງ, ພໍ່ແມ່, ປູ່ຍ່າຕາຍາຍ ແລະ ຫຼານ ຢູ່ໃນເຊື້ອສາຍຜີນ້ອງຊັ້ນ ຈຳ ໃນກໍລະນີນີ້ ລັດຈະຖືວ່າ ເປັນການໂອນສິດສືບທອດ ມູນມໍລະດົກ ຕາມກົດໝາຍ ທີ່ໄດ້ບົ່ງໄວ້. ສະນັ້ນ ລັດຈະ ຮັບຜິດຊອບກວດກາ ຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງເອກະສານ ແລ້ວເຊັນຮັບຮອງ ການໂອນສິດສືບທອດໃຫ້ພວກກ່ຽວ ໂດຍບໍ່ມີການເກັບພາສີລາຍໄດ້ ແຕ່ຢ່າງໃດ, ແຕ່ພວກກ່ຽວຕ້ອງເສຍຄ່າທຳນຽມ ຕາມລະບຽບການ ແລະ ຕ້ອງ ປະກອບເອກະສານ ຢັ້ງຢືນ ຄົບຖ້ວນ ຄື : ໃບຄຳຮ້ອງ, ຊຶ່ງເນື້ອໃນ ຕ້ອງມີການອ້າງເຫດຜົນ ທີ່ຈຳເປັນໃນການໂອນຊື່ ຫຼື ສິດສືບທອດ ສວນປູກໄມ້ ໃຫ້ຜູ້ທີ 2; ໃບຢັ້ງຢືນ ຂອງອຳນາດການປົກຄອງຂັ້ນບ້ານ ແລະ ເມືອງ ພ້ອມດ້ວຍ ປື້ມສຳມະໂນ ຄົວ ແລະ ບັດປະຈຳຕົວ ວ່າຜູ້ ກ່ຽວ ແມ່ນຍາດຕິພີ່ນ້ອງຊັ້ນຈຳ ຂອງເຈົ້າຂອງສວນເດີມແທ້ ແລະ ບັນດາເອກະສານ ຄົບຊຸດ ຂອງສວນປູກໄມ້ ທີ່ໄດ້ສ້າງ ມາແຕ່ຕົ້ນ.

2.2 ການໂອນສິດຄຸ້ມຄອງສວນປູກໄມ້ ໃຫ້ຜູ້ທີ 2 ແລະ ຜູ້ຕໍ່ໆໄປ ຊຶ່ງຕ້ອງແມ່ນຄົນພາຍໃນປະເທດ ແຕ່ພວກກ່ຽວນັ້ນ ບໍ່ແມ່ນເຊື້ອສາຍພີ່ນ້ອງຊັ້ນຈຳ ຂອງເຈົ້າຂອງສວນ ຕາມທີ່ກົດໝາຍໄດ້ ກຳນົດໄວ້ໂດຍວິທີການເຮັດໃບມອບກຳມະສິດ. ໃນກໍລະນີນີ້, ລັດຖືວ່າ ການໂອນສິດຄຸ້ມຄອງສວນປູກໄມ້ ດັ່ງກ່າວ ຕ້ອງມີການຄິດໄລ່ມູນຄ່າ ການສ້າງ ສວນ ແລະ ລັດຕ້ອງເກັບພາສີລາຍໄດ້ ຈາກຜູ້ມອບ-ໂອນ. ສະນັ້ນ ພວກກ່ຽວ ຕ້ອງພ້ອມກັນປະກອບເອກະສານ ລວມມີ : ໃບຄຳຮ້ອງ, ຊຶ່ງເນື້ອໃນ ຕ້ອງອ້າງເຫດຜົນ ຂອງການໂອນສິດຄຸ້ມຄອງສວນປູກໄມ້ ດັ່ງກ່າວ; ສັນຍາ ມອບ-ຮັບ ສິດຄຸ້ມຄອງສວນປູກໄມ້ ຊຶ່ງເນື້ອໃນ ຕ້ອງລະບຸແຈ້ງ ກ່ຽວກັບມູນຄ່າ ຂອງສວນປູກ; ບັນດາເອກະສານ ເດີມຄົບຊຸດ ກ່ຽວກັບສວນປູກໄມ້ດັ່ງກ່າວ ແລະ ໃບຢັ້ງຢືນທີ່ຢູ່ ພ້ອມດ້ວຍຮູບຖ່າຍຂະໜາດ 4×6 ຂອງຜູ້ມອບ ແລະ ຜູ້ຮັບ ຄົນລະ 4 ແຜ່ນ.

ພາຍຫຼັງ ທີ່ໄດ້ຮັບເອກະສານຄົບຖ້ວນ ທີ່ກ່າວຂ້າງເທິງນັ້ນ ເຈົ້າໜ້າທີ່ສົ່ງເສີມຂັ້ນຮັບຜິດຊອບ ຂອງຂະແໜງການປ່າໄມ້ ແລະ ການເງິນ ພ້ອມກັນກວດກາ ເບິ່ງເອກະສານ, ລົງກວດກາ ແລະ ຕີລາຄາມູນຄ່າຂອງຕົ້ນໄມ້ ພ້ອມດ້ວຍ ກິດຈະການຕ່າງໃນສວນປູກ ແລ້ວຄິດໄລ່ ຄ່າພາສີລາຍໄດ້ຂອງລັດ ທີ່ເຈົ້າຂອງສວນ ຕ້ອງຈ່າຍໃຫ້ລັດຢ່າງຄົບຖ້ວນ ຕາມລະບຽບການ. ຫຼັງຈາກນັ້ນ ຈຶ່ງນຳສະເໜີ ໃຫ້ຂັ້ນ ທີ່ມີສິດຕົກລົງ ແລະ ອະນຸມັດຮັບຮອງຢ່າງເປັນທາງການ.

2.3 ການຊື້ຂາຍໄມ້ຢືນຕົ້ນ ໃນສວນປູກ : ລັດອະນຸຍາດໃຫ້ຊື້ຂາຍ ສະເພາະແຕ່ຈຳນວນໄມ້ຢືນຕົ້ນ ໃນສວນປູກ ແຕ່ລັດບໍ່ອະນຸຍາດໃຫ້ມີການຊື້ຂາຍເນື້ອທີ່ດິນ ຂອງສວນປູກ ເພາະຈະເຮັດໃຫ້ ມີການພົນແຍກຜູ້ທຸກ ແລະ ຜູ້ຮັ່ງ. ໃນການຊື້ຂາຍຕົວຈິງຜູ້ເປັນເຈົ້າຂອງຕ້ອງປະກອບເອກະສານລວມມີ : ໃບຄຳຮ້ອງ ຊຶ່ງເນື້ອໃນຕ້ອງ ອ້າງເຫດຜົນກ່ຽວກັບການຊື້ຂາຍໄມ້ຢືນຕົ້ນໃນສວນຂອງຕົນ ແລະ ສັນຍາຊື້-ຂາຍໄມ້ຢືນຕົ້ນທີ່ທາງສອງຝ່າຍ ໄດ້ຕົກ ລົງຮ່ວມກັນແລ້ວ. ເນື້ອໃນ ຂອງສັນຍາຕ້ອງປະກອບມີ ດັ່ງນີ້ :

- ພາຍຫຼັງຊື້-ຂາຍແລ້ວ ຜູ້ຊື້ໄມ້ຈະຕັດອອກໂລດ ຫຼື ຈະຈົ່ງຕົ້ນໄມ້ ໄວ້ໃນສວນຕື່ມອີກຈັກປີ, ຮອດປີໃດຈະຕັດໄມ້ ອອກໃຫ້ໝົດ ເພື່ອໃຫ້ເຈົ້າຂອງສວນຜູ້ເກົ່າໄດ້ປູກໄມ້ຄືນໃໝ່ ຫຼື ອາດປູກສະ... ...ໂລດ ຖ້າຫາກມີການຕັດຢອນ.
- ໃນໄລຍະບໍ່ທັນຕັດຕົ້ນໄມ້ອອກນັ້ນ, ຈຳນວນຕົ້ນໄມ້ ທີ່ໄດ້ຊື້-ຂາຍນຳກັນດັ່ງກ່າວພ້ອມດ້ວຍສວນ ແມ່ນມອບໃຫ້ ຝ່າຍໃດ ເປັນຜູ້ຮັບຜິດຊອບ ໃນການປົກປັກຮັກສາ.
- ບັນດາເອກະສານເດີມ ຄົບຊຸດ ກ່ຽວກັບການສ້າງສວນປູກໄມ້ ທີ່ທາງສອງຝ່າຍຈະຊື້ຂາຍນຳກັນ ໃນຄັ້ງນີ້.
- ພາຍຫຼັງເຈົ້າໜ້າທີ່ສົ່ງເສີມ ຂັ້ນຮັບຜິດຊອບ ໄດ້ຮັບເອກະສານດັ່ງກ່າວ ແລະ ໄດ້ຄົ້ນຄວ້າຢ່າງຖືກຕ້ອງ ຈຶ່ງລົງກວດກາຕົວຈິງ ຄິດໄລ່ພາສີລາຍໄດ້ ຈາກການຂາຍໄມ້ ຢືນຕົ້ນ ທີ່ເຈົ້າຂອງສວນຜູ້ຂາຍໄມ້ ຕ້ອງເສຍໃຫ້ລັດຢ່າງຄົບຖ້ວນ ແລ້ວຈຶ່ງ ຢັ້ງຢືນ ໃຫ້ຂັ້ນມີສິດຕົກລົງ ແລະ ອະນຸມັດຮັບຮອງ ການຊື້ຂາຍຕາມລະບຽບການ.

2.4 <u>ການຂໍອະນຸຍາດ ຕັດໄມ້ໃນສວນປູກ</u>

2.4.1 ການຕັດໄມ້ປູກໃນສວນ ເພື່ອຂາຍເປັນສິນຄ້າ ຢູ່ພາຍໃນ ຫຼື ສົ່ງອອກຕ່າງປະເທດ : ຜູ້ເປັນເຈົ້າຂອງຕ້ອງປະກອບ ເອກະສານດັ່ງນີ້ : ໃບຄຳຮ້ອງ ຂໍຕັດໄມ້ປູກ, ສັນຍາຊື້ຂາຍໄມ້ປູກ ທີ່ຂໍຕັດ ແລະ ເອກະສານເດີມຄົບຊຸດ

ກ່ຽວກັບການສ້າງສວນປູກ. ເອກະສານຈຳນວນດັ່ງກ່າວ ຕ້ອງນຳສະເໜີຜ່ານ ຫ້ອງການກະສິກຳປ່າໄມ້ ເມືອງ ແລະ ພະແນກກະສິກຳ-ປ່າໄມ້ ແຂວງ.

ພາຍຫຼັງເຈົ້າໜ້າທີ່ປ່າໄມ້ ໄດ້ລົງກວດກາວັດແທກ ໄມ້ຢືນຕົ້ນ, ຕີລາຄາ ສະພາບລວມ ຂອງສວນປູກ ແລະ ຈຳນວນບໍລິມາດໄມ້ຢືນຕົ້ນ ແລ້ວ ຖ້າເຫັນວ່າຖືກຕ້ອງ ສອດຄ່ອງຕາມເອກະສານ ທີ່ເຈົ້າຂອງໄດ້ສະເໜີຕັດ ຈຶ່ງຢັ້ງຢືນ ໃຫ້ຫົວໜ້າ ພະແນກກະສິກຳ-ປ່າໄມແຂວງ ເປັນຜູ້ອອກໃບອະນຸຍາດຕັດ ຕາມລະບຽບການ.

2.4.2 ການຕັດໄມ້ ໃນສວນປູກຕົນເອງ ເພື່ອປຸກສ້າງສ້ອມແປງ : ບຸກຄົນ, ຄອບຄົວ ແລະ ກຸ່ມກອງລວມໝູ່ ມີຈຸດປະສົງຢາກຕັດໄມ້ ໃນສວນຕົນເອງ ເພື່ອປຸກສ້າງ ສ້ອມແປງເຮືອນ ຫຼື ສຳນັກງານອົງການຕ່າງໆ ໂດຍທ້ອງຖິ່ນຮັບຮູ້ນຳ, ລັດບໍ່ເກັບ ຄ່າພາສີ ແລະ ພັນທະຕ່າງໆໃດໆທັງສິ້ນ. ຖ້າຕ້ອງການຕັດ ແຕ່ 5 ຕົ້ນລົງມາເພື່ອ ສ້ອມແປງເຮືອນ ແລະ ສຳນັກ ງານ ອົງການຕ່າງໆ ຊຶ່ງຕົ້ນໄມ້ ຈຳນວນດັ່ງກ່າວບໍ່ໄດ້ເຄື່ອນຍ້າຍ ໄປຕ່າງເມືອງ ແມ່ນບໍ່ຈຳເປັນຕ້ອງຂໍອະນຸຍາດ ຈາກພະແນກກະສິກຳ-ປ່າໄມ້ແຂວງ, ພຽງແຕ່ສະເໜີລາຍງານໃຫ້ປ່າໄມ້ບ້ານ ແລະ ຫ້ອງການ ກະສິກຳ-ປ່າໄມ້ ເມືອງເສຍກ່ອນ ເພື່ອຮັບຊາບ ແລະ ຕິດຕາມ. ຖ້າຈະຕັດກາຍຈຳນວນ 5 ຕົ້ນຂຶ້ນໄປ ຫຼື ຈະມີການເຄື່ອນຍ້າຍ ໄປຕ່າງເມືອງ ແລະ ຕ່າງແຂວງ ຕ້ອງປະກອບເອກະສານ ຂໍອະນຸມັດຕັດ ພ້ອມດ້ວຍແຜນ ປຸກສ້າງສ້ອມແປງ ເພື່ອໃຫ້ ພະແນກກະສິກຳປ່າໄມ້ແຂວງ ພິຈາລະນາ ແລະ ອະນຸມັດ.

2.4.3 ການຕັດສາງ ຂະຫຍາຍໄລຍະໄມ້ ອອກຈາກສວນປູກ : ເພື່ອສ້າງເງື່ອນໄຂ ໃຫ້ແກ່ຕົ້ນໄມ້ ທີ່ໄດ້ປູກ ສາມາດ ຈະເລີນເຕີບໂຕທາງດ້ານປະລິມານ ແລະ ຄຸນນະພາບ ຢ່າງຖືກຕ້ອງ ຕາມຫຼັກວິຊາການ ມັນມີຄວາມ ຈຳເປັນ ຕ້ອງ ໄດ້ຕັດສາງ ຂະຫຍາຍໄລຍະ, ວຽກງານ ດັ່ງກ່າວ ແມ່ນໜ້າທີ່ ຂອງຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ພະແນກ ກະສິກຳ-ປ່າໄມ້ແຂວງ ເປັນຜູ້ຊີ້ນຳ ແລະ ວາງແຜນ ໂດຍສົມທົບ ກັບເຈົ້າຂອງສວນປູກ. ກຳນົດ ໝາຍເວລາ ຂອງການຕັດສາງ ຂະຫຍາຍໄລຍະ ແມ່ນອີງໃສ່ ແຕ່ລະຊະນິດພັນໄມ້ ທີ່ປູກ.

ໄມ້ ທີ່ຖືກຕັດອອກ ຈາກການຕັດສາງ ຂະຫຍາຍໄລຍະ ຊຶ່ງບໍ່ສາມາດຊື້ຂາຍໄດ້ ຍ້ອນເຫັນວ່າມັນຍັງນ້ອຍໂພດ, ລັດຈະບໍ່ເກັບຄ່າພາສີ ລາຍໄດ້, ແຕ່ກົງກັນຂ້າມ ຖ້າວ່າໄມ້ ທີ່ຖືກຕັດອອກ ສາມາດຊື້ຂາຍໄດ້ ລັດຈະເກັບພາສີລາຍໄດ້ ຕາມລະບຽບການ.

## IV. ທິດນຳ ແລະ ວິທີການຈັດຕັ້ງປະຕິບັດ

### 1. ທິດນຳ

ເພື່ອຊຸກຍູ້ ແລະ ສົ່ງເສີມ ໃຫ້ຂະບວນການປູກໄມ້ ຂອງມວນຊົນ ໃຫ້ກວ້າງຂວາງ ແລະ ຟົດຟື້ນ, ສະນັ້ນ ໃນເວລາ ຈັດຕັ້ງປະຕິບັດຕົວຈິງ ພະນັກງານຜູ້ຮັບຜິດຊອບ ການສົ່ງເສີມ ແຕ່ລະຂັ້ນ ຕ້ອງວ່ອງໄວ, ບໍ່ຊ້າຍຈັດ-ຂວາໂພດ ທີ່ຈະພາໃຫ້ ຊັກຊ້າ ເສຍເວລາຂອງປະຊາຊົນ ແລະ ນັກລົງທຶນປູກໄມ້ ອັນຈະເປັນສາເຫດ ໃຫ້ເຂົາເຈົ້າ ທໍ້ຖອຍ ແລະ ເສຍກຳລັງໃຈ, ແຕ່ພ້ອມກັນນັ້ນ ກໍບໍ່ຄວນຖືເບົາ ທາງດ້ານລະບຽບ ຫຼັກການ ຫຼືເຮັດແບບຜິວເຜີນ ຂາດຄວາມຮັບຜິດຊອບ.

ເຈົ້າໜ້າທີ່ຮັບຜິດຊອບ ແຕ່ລະຂັ້ນ ຕ້ອງເດັດຂາດ ແລະ ເຂັ້ມງວດທາງດ້ານລະບຽບຫຼັກການ, ພ້ອມດຽວ ກັນນັ້ນ ກໍຕ້ອງປົ້ມນວນ ແລະ ຄ່ອງແຄ້ວ ໃນການຈັດຕັ້ງປະຕິບັດ ໂດຍຫຼີກເວັ້ນ ຈາກການສໍ້ໂກງ, ກິນສິນບົນ ແລະ ສ້າງ ຄວາມບໍ່ຍຸດຕິທຳ ໃນສັງຄົມ.

### 2. ວິທີຈັດຕັ້ງປະຕິບັດ :

2.1 ການເຜີຍແຜ່ ແລະ ຮໍ່າຮຽນເອກະສານ : ພາຍຫຼັງໄດ້ຮັບບົດແນະນຳ ສະບັບນີ້, ພະແນກກະສິກຳ-ປ່າໄມ້ ແຂວງ ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງ ຕ້ອງນຳສະເໜີ ປຶກສາຫາລື ກັບອຳນາດການປົກຄອງຂັ້ນຂອງຕົນ ເພື່ອຈັດຕັ້ງ ການເຜີຍແຜ່ ແລະ ຮໍ່າຮຽນ ເອກະສານສະບັບນີ້ ເປັນ 2 ບາດກ້າວ ຄື :

<u>ບາດກ້າວ ທີ 1</u> : ຈັດຕັ້ງຮໍ່າຮຽນ ໃຫ້ສະເພາະ ແຕ່ພະນັກງານປ່າໄມ້ ແລະ ພະນັກງານພາສີ ທີ່ດິນ ຂອງແຂວງ ແລະ ເມືອງ ເພື່ອໃຫ້ເຂົາເຈົ້າ ເຂົ້າໃຈ ແລະຊາບຊຶ້ງ ຢ່າງເລິກເຊິ່ງເສຍກ່ອນ.

<u>ບາດກ້າວ ທີ 2</u> : ຈັດພິມເອກະສານ ແລ້ວແຈກຈ່າຍ ແລະ ເຜີຍແຜ່ ຢ່າງກວ້າງຂວາງ ໃຫ້ບັນດາບໍລິສັດ ຂອງລັດ ແລະ ເອກະຊົນ, ນັກທຸລະກິດປູກໄມ້ ແລະ ປະຊາຊົນບັນດາເຜົ່າ ໃນທ້ອງຖິ່ນ ຂອງຕົນ ໃຫ້ຮັບຮູ້ ແລະເຂົ້າໃຈຢ່າງທົ່ວເຖິງກັນ.

2.2 ການຈັດຕັ້ງ ສົ່ງເສີມ : ເພື່ອເຮັດໃຫ້ ວຽກງານສົ່ງເສີມການປູກໄມ້ ສາມາດດຳເນີນໄປດ້ວຍດີ, ຕອບສະໜອງໄດ້ ຕາມຄວາມຮຽກຮ້ອງຕ້ອງການ ຂອງປະຊາຊົນ ແລະ ນັກລົງທຶນປູກໄມ້ ພ້ອມທັງເຮັດໃຫ້ວຽກງານດັ່ງກ່າວມີການຄຸ້ມຄອງຢ່າງເປັນລະບົບຄົບຊຸດ ແລະ ເອກະພາບແຕ່ເທິງລົງລຸ່ມ, ກະຊວງກະສິກຳ-ປ່າໄມ້ ຕົກລົງມອບໃຫ້ກົມປ່າໄມ້, ພະແນກກະສິກຳ-ປ່າໄມ້ແຂວງ ແລະ ຫ້ອງການກະສິກຳປ່າໄມ້ເມືອງ ຈັດຕັ້ງໜ່ວຍງານ ຫຼື ຈຸສົ່ງເສີມ ການປູກໄມ້ ຢູ່ແຕ່ລະຂັ້ນ ເພື່ອຮັບຜິດຊອບສະເພາະ ວຽກງານສົ່ງເສີມ ການປູກໄມ້, ຊຶ່ງລວມມີ ວຽກງານ ດັ່ງລຸ່ມນີ້ :

- ເຜີຍແຜ່ນະໂຍບາຍສົ່ງເສີມ ພ້ອມທັງຂໍ້ກຳນົດ, ກົດລະບຽບ ແລະ ຂັ້ນຕອນຕ່າງໆ ຂອງການປູກໄມ້ ໃຫ້ກວ້າງ ຂວາງ ໃນໝູ່ມະຫາຊົນ.
- ຮັບເອົາ ເອກະສານຄຳຮ້ອງ ຂອງບຸກຄົນ, ຄອບຄົວ, ກຸ່ມກອງລວມໝູ່, ຫົວໜ່ວຍທຸລະກິດ ແລະ ນັກລົງທຶນ ຕ່າງໆ ທີ່ມີຈຸດປະສົງຢາກລົງທຶນປູກໄມ້; ຢາກຊື້ຂາຍໄມ້ປູກ ຫຼື ຢາກໂອນສິດຄຸ້ມຄອງ ແລະ ສືບທອດສວນປູກໄມ້ຂອງຕົນ.
- ຄົ້ນຄວ້າ ພິຈາລະນາ ບັນດາເອກະສານຕ່າງໆ, ໃຫ້ການແນະນຳ ເພີ່ມເຕີມ ອັນໃດຍັງບໍ່ທັນຄົບຖ້ວນ ຫຼື ບໍ່ທັນຖືກຕ້ອງ.
- ລົງຕິດຕາມ ແລະ ຊຸກຍູ້ ການປະຕິບັດວຽກງານແຕ່ລະໄລຍະ ຮ່ວມກັບທະນາຄານ ທີ່ກ່ຽວຂ້ອງ ໃນກໍລະນີທີ່ຜູ້ລົງທຶນປູກໄມ້ ໄດ້ກູ້ຢືມເງິນສິນເຊື່ອ.
- ລົງກວດກາ, ປະກອບຄຳເຫັນແນະນຳ ແລະ ຢັ້ງຢືນ ຫຼື ຮັບຮອງ ໃຫ້ແກ່ເຂົາເຈົ້າ ຕາມສະພາບຄວາມເປັນຈິງ, ເພື່ອ ເປັນບ່ອນອີງໃຫ້ຂັ້ນມີສິດ ຕົກລົງ ແລະ ອະນຸມັດຢ່າງຖືກຕ້ອງ.
- ຄົ້ນຄວ້າ ຊອກຫາຊ່ອງທາງອອກ ຊ່ວຍປະຊາຊົນ ຜູ້ມີຈຸດປະສົງ ຢາກປູກໄມ້ ແຕ່ຍັງຂາດທຶນຮອນ, ການຕະຫລາດ ແລະ ດ້ານການບໍລິການອື່ນໆ

2.3 ຜ່ານການຈັດຕັ້ງປະຕິບັດຕົວຈິງຢູ່ແຕ່ລະທ້ອງຖິ່ນ, ຖ້າເຫັນວ່າມີຂອດໃດໜຶ່ງ ໃນບົດແນະນຳສະບັບນີ້ ຍັງບໍ່ສອດຄ່ອງກັບສະພາບຕົວຈິງ ເຊິ່ງພາໃຫ້ເກີດມີຂໍ້ຫຍຸ້ງຍາກທີ່ທາງແຂວງ ແລະ ເມືອງບໍ່ສາມາດແກ້ໄຂໄດ້ຈຶ່ງໄດ້ຮີບຮ້ອນ ລາຍງານສ່ອງແສງໄປຍັງກະຊວງກະສິກຳ-ປ່າໄມ້ເພື່ອພິຈາລະນາແລະແກ້ໄຂໃຫ້ສອດຄ່ອງຢ່າງທັນການ.

ລັດຖະມົນຕີ ກະຊວງກະສິກຳ-ປ່າໄມ້

ສີສະຫວາດ ແກ້ວບຸນພັນ